ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ.

------===000===-----

ທະນາຄານແຫ່ງ ສປປ ລາວ

ກອງທຶນປົກປ້ອງຜູ້ຝາກເງິນ

ເລກທີ: 283 /ກທປ

ນະຄອນຫລວງວຽງຈັນ, ວັນທີ 10/05/2012

**ເຖິງ:** ທ່ານ ຜູ້ອຳນວຍການບັນດາທະນາຄານທຸລະກິດລັດ, ທະນາຄານຮ່ວມທຶນ, ທະນາຄານສາຂາຕ່າງປະເທດ ແລະ ທະນາຄານເອກະຊົນ ທີ່ເປັນສະມາຊິກຂອງກອງທຶນປົກປ້ອງຜູ້ຝາກເງິນຢູ່ໃນ **ສປປ** ລາວ.

**ເລື່ອງ:** ການສົ່ງຂໍ້ມູນກ່ຽວກັບການປະຕິບັດອັດຕາແລກປ່ຽນປິດບັນຊີທ້າຍເດືອນ.

- ອີງຕາມແຈ້ງການ ກ່ຽວກັບການຍົກເລີກການແຈ້ງອັດຕາແລກປ່ຽນປິດບັນຊີທ້າຍເດືອນ ສະບັບເລກທີ 101/**ກບຂ**, ລົງວັນທີ 29/02/2012.
- ອີງຕາມແຈ້ງຕອບ ຂອງກົມຄຸ້ມຄອງ ທະນາຄານທຸລະກິດ ສະບັບເລກທີ 297/**ກຄທ**, ລົງວັນທີ 04/05/2012.

ເພື່ອເປັນບ່ອນອີງໃຫ້ແກ່ການຄິດໄລ່ເກັບຄ່າເບັ້ຍປະກັນເງິນຝາກ ຂອງບັນດາທະນາຄານທຸລະກິດທີ່ເປັນສະມາຊິກຂອງກອງທຶນປົກປ້ອງຜູ້ຝາກເງິນ ໃຫ້ມີຄວາມວ່ອງໄວ, ຊັດເຈນ ແລະ ສອດຄ່ອງກັບຄວາມເປັນຈິງໃນການປະຕິບັດອັດຕາແລກປ່ຽນປິດບັນຊີທ້າຍເດືອນ ຕາມອັດຕາຊື້ຂອງແຕ່ລະທະນາຄານ; ກອງທຶນປົກປ້ອງຜູ້ຝາກເງິນ ຂໍຖືເປັນກຽດແຈ້ງມາຍັງທ່ານ ເພື່ອຈັດສົ່ງຂໍ້ມູນກ່ຽວກັບອັດຕາແລກປ່ຽນປິດບັນຊີທ້າຍເດືອນ ຂອງແຕ່ລະເດືອນ ໃຫ້ກອງທຶນປົກປ້ອງຜູ້ຝາກເງິນ ຈຳນວນ 01 ສະບັບ, ນັບແຕ່ເດືອນ 02 ປີ 2012 ເປັນຕົ້ນໄປ ແລະ ໃຫ້ຄັດຕິດໃສ່ກັບບົດລາຍງານຖານະການເງິນຂອງແຕ່ລະເດືອນທີ່ສົ່ງມາໃຫ້ກອງທຶນປົກປ້ອງປ້ອງຜູ້ຝາກເງິນ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງບັນດາທະນາຄານທຸລະກິດ ທີ່ເປັນສະມາຊິກຂອງກອງທຶນປົກປ້ອງຜູ້ຝາກເງິນ ເພື່ອຮັບຊາບ ແລະ ຈັດຕັ້ງປະຕິບັດ. ສ່ວນແຈ້ງການອື່ນໆທີ່ຂັດກັບແຈ້ງການສະບັບນີ້ຖືວ່າລົບລ້າງ.

ເຊັນແທນຮັກສາການ

**ຜູ້ອຳນວຍການ ກອງທຶນປົກປ້ອງຜູ້ຝາກເງິນ**

ທະນາຄານ ແຫ່ງ ສປປ ລາວ
ກອງທຶນປົກປ້ອງ
ຜູ້ຝາກເງິນ
DEPOSITERS PROTECTION FUND
ນະຄອນຫລວງວຽງຈັນ

ແສງດາວວົງ ອິນທຳຊາລ